ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

———ooo———

ອົງການອະທິໄອຍະການ
ປະຊາຊົນ ແຫ່ງ ສປປລ

ເລກທີ ..593../ອສປ

ອົງການໄອຍະການປະຊາຊົນ
ແຂວງຫຼວງພະບາງ
ເລກທີ 139
ວັນທີ 1.8.94

## ຄຳສັ່ງແນະນຳ

ຮຽນ ທີ່ : ບັນດາອົງການ ໄອຍະການປະຊາຊົນ ແລະສານປະຊາຊົນທ້ອງຖິ່ນ.

ເລື່ອງ : ການເຂົ້າຮ່ວມຂອງ ໄອຍະການປະຊາຊົນໃນການພິຈາລະນາຄະດີແພ່ງ ໃນທີ່ປະຊຸມສານປະຊາຊົນຂັ້ນຕົ້ນແລະຂັ້ນລຶບລ້າງ

- ໂດຍອີງຕາມລັດຖະທຳມະນູນແຫ່ງ ສ.ປ.ປ. ລາວ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍອົງການ ໄອຍະການປະຊາຊົນ.

- ໂດຍອີງຕາມການຕົກລົງໃນກອງປະຊຸມລະຫວ່າງອົງການອະທິໄອຍະການປະຊາຊົນ ແຫ່ງ ສ.ປ.ປ. ລາວ. ກັບສານປະຊາຊົນສູງສຸດທີ່ໄດ້ເປີດປະຊຸມຂຶ້ນ ໃນເວລາ 9 ໂມງ ຂອງວັນທີ 8 ກໍລະກົດ 1994. ທີ່ສຳນັກງານຂອງສານປະຊາຊົນສູງສຸດ.

ກອງປະຊຸມ ໄດ້ຄົ້ນຄວ້າກ່ຽວກັບການເຂົ້າຮ່ວມຂອງ ໄອຍະການປະຊາຊົນໃນການ ພິຈາລະນາຄະດີແພ່ງໃນທີ່ປະຊຸມສານປະຊາຊົນຂັ້ນຕົ້ນແລະຂັ້ນລຶບລ້າງ ໃນໄລຍະຜ່ານມານັ້ນເຫັນວ່າການແກ້ໄຂອຸທອນທີ່ມີແນວໂນ້ມສະລັບຊັບຊ້ອນ, ກວ້າງຂວາງແລະຍືດຍາວ ໃສ່ກັນແລະກັນອັນພາໃຫ້ອົງການພົນລະເມືອງ, ວັດຈົນ. ດ້ານໜຶ່ງອີກ ອົງການ ໄອຍະການກໍບໍ່ທັນ ໄດ້ສຸມໃສ່ແຮັດວຽກງານ ໃຈກາງຕາມຕໍ່ຂອງກໍ ຕາມທີ່ກົດໝາຍວ່າດ້ວຍອົງການ ໄອຍະການປະຊາຊົນທີ່ໄດ້ກຳນົດໄວ້,

ດັ່ງນັ້ນກອງປະຊຸມ ໄດ້ປຶກສາຫາລື, ຕົກລົງເປັນເອກະພາບກັນວ່ານັບແຕ່ນີ້ໄປການພິຈາລະນາຄະດີແພ່ງ ໃນທີ່ປະຊຸມສານຂອງສານປະຊາຊົນຂັ້ນຕົ້ນ ແລະ ຂັ້ນລຶບລ້າງນັ້ນບໍ່ຈຳເປັນໃຫ້ມີການເຂົ້າຮ່ວມຂອງ ໄອຍະການປະຊາຊົນ. ແຕ່ໄອຍະການປະຊາຊົນມີໜ້າທີ່ຕິດຕາມກວດກາ ການດຳເນີນຄະດີຢູ່ກອງປະຊຸມສານ (ນັບທັງຄະດີແພ່ງ ແລະການປະຕິບັດຄຳຕັດສິນຂອງສານທີ່ກອງຕາມກົດໝາຍຫຼັງສານຕອງສົ່ງສຳນວນ ຄຳຕັດສິນທີ່ສຳພິພາກສາຂອງສານ ( ນັບທັງຄະດີແພ່ງແລະຄະດີອາຍາ ) ໃຫ້ອົງການ ໄອຍະການ ປະຊາຊົນ ເພື່ອຕິດຕາມກວດກາ. ບາງຄັ້ງຄາວ ໄອຍະການກໍຕ້ອງ ເຂົ້າຮ່ວມກອງປະຊຸມສານພິຈາລະນາ ຄະດີແພ່ງໃນນາມ ເປັນຜູ້ຕິດຕາມກວດກາຕົວຈິງໃນການດຳເນີນຄະດີ.

ຖ້າວ່າ ໃນເວລາດຳເນີນຄະດີແພ່ງນັ້ນຫາກມີບັນຫາຫຍຸ້ງຍາກສັບສົນ ໄອຍະການປະຊາຊົນອາດຈະ ເຂົ້າຮ່ວມປຶກສາຫາລືເປັນບາງຄະດີອີງກົດໝາຍ ໄດ້ກຳນົດ ໄວ້ໂດຍການສະເໜີຂອງສານປະຊາຊົນເທົ່ານັ້ນ.

ດັ່ງນັ້ນອະທິໄອຍະການປະຊາຊົນ ແຫ່ງ ສ.ປ.ປ. ລາວ ຈຶ່ງແຈ້ງມາຍັງບັນດາອົງການ ໄອຍະການ ປະຊາຊົນແລະສານປະຊາຊົນທ້ອງຖິ່ນຊາບ. ເພື່ອຈັດຕັ້ງປະຕິບັດຄຳສັ່ງແນະນຳດັ່ງກ່າວ.

ວຽງຈັນ,ວັນທີ 25 / 7 /1994

ອະທິໄອຍະການປະຊາຊົນ.

ຄຳຫລ້າ ໄຊຍະສານ